ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 8046 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2009

# ຄຳສັ່ງ

## ຂອງລັດຖະມົນຕີວ່າການ

## ກ່ຽວກັບການຈັດຕັ້ງ ຕິດຕາມ, ກວດກາ ວຽກງານບູລະນະຮັກສາທາງຫຼວງ

ເຖິງ: ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ

- ອີງໃສ່ດຳລັດ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22/10/2007 ວ່າດ້ວຍການຈັດຕັ້ງ ເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

ໃນລະດູຝົນປີ 2008 ຜ່ານມາ ໄດ້ມີຝົນຕົກໜັກຕິດຕໍ່ກັນຫຼາຍວັນ ເຮັດໃຫ້ບັນດາເສັ້ນທາງຫຼວງສາຍຫຼັກ ໄດ້ຮັບຜົນກະທົບຢ່າງໜັກໜ່ວງ ແລະ ປັດຈຸບັນກໍ່ກຳລັງຊຸ່ນຊ້ຽວ ຈັດຕັ້ງການບູລະນະ ສ້ອມແປງຄືນ. ດັ່ງນັ້ນ, ເພື່ອຮັບປະກັນການສັນຈອນຕາມທາງຫຼວງໃນທົ່ວປະເທດ ໂດຍສະເພາະທາງຫຼວງແຫ່ງຊາດ ໃນລະດູຝົນປີ 2009 ແລະ ໃນຕໍ່ໜ້າໃຫ້ໂລ່ງລ່ຽນ.

### ລັດຖະມົນຕີວ່າການ ອອກຄຳສັ່ງ:

1. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ຈັດຕັ້ງກວດກາໜ້າທາງ, ລະບົບລະບາຍນ້ຳ, ລະບົບຄວາມປອດໄພທາງຫຼວງ ສຳລັບຕອນທາງທີ່ໄດ້ເຊັນສັນຍາມອບເໝົາຂາດຕົວ 3ປີແລ້ວ ໃຫ້ຊຸກຍູ້ບໍລິສັດຮັບເໝົາ ຈັດຕັ້ງໃຫ້ມີໜ່ວຍງານຮັບຜິດຊອບແຕ່ລະຈຸດ, ແຕ່ລະຕອນ, ເອົາໃຈໃສ່ຕິດຕາມ ກວດກາ ແກ້ໄຂບັນຫາຕ່າງໆ ເປັນຕົ້ນແມ່ນ: ຕາບຂຸມໜ້າທາງ, ຕາບບ່າທາງ, ສ້ອມແປງ, ລວງ, ອະນາໄມລະບົບລະບາຍນ້ຳ (ຮ່ອງລະບາຍນ້ຳ, ທໍ່ລະບາຍນ້ຳ), ຈັດຕັ້ງຖາງຫຍ້າແຄມທາງ ແລະ ສ້ອມແປງ ລະບົບຄວາມປອດໄພໃນການສັນຈອນ ແລະ ອື່ນໆ ໃຫ້ຢູ່ໃນສະພາບດີ.

2. <u>ການຄຸ້ມຄອງໂຄງການ</u>: ໃຫ້ມີມາດຕະການເດັດຂາດ ໃນການປະຕິບັດເງື່ອນໄຂສັນຍາຮັບເໝົາ, ສັນຍາມອບເໝົາຂາດຕົວ, ມາດຕະຖານເຕັກນິກຢ່າງຄົບຖ້ວນ, ເຂັ້ມງວດ. ວັດສະດຸກໍ່ສ້າງ, ສ້ອມແປງ ຕ້ອງຜ່ານການທົດລອງ ແລະ ຮັບຮອງຄຸນນະພາບ, ພ້ອມນີ້ກໍ່ຕ້ອງປະຕິບັດຕາມຂັ້ນຕອນການກໍ່ສ້າງ-ສ້ອມແປງ ຢ່າງເຂັ້ມງວດ. ໃຫ້ມອບໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ ເປັນຜູ້ຮັບຜິດຊອບ ໃນການຕິດຕາມ, ກວດກາຢ່າງໃກ້ຊິດ ເປັນປະຈຳແຕ່ລະວັນ, ໂດຍມີການມອບສິດ ໃຫ້ຫ້ອງການ ຍທຂ ເມືອງ ໃນການສັ່ງໃຫ້ຜູ້ຮັບເໝົາ ປະຕິບັດຕາມ ການຊີ້ນຳຂອງຫົວໜ້າຫ້ອງການ ຍທຂ ເມືອງ.

3. <u>ກໍລະນີເກີດເຫດການສຸກເສີນ ຫຼື ໄພພິບັດທາງທຳມະຊາດ</u>:

   3.1 ໃຫ້ສົມທົບກັບພາກສ່ວນກ່ຽວຂ້ອງ ຂອງແຂວງ ແລະ ນະຄອນຫຼວງ ເພື່ອຮັບປະກັນ ຄວາມເປັນເອກະພາບໃນການກວດກາ, ເກັບກຳ, ຢັ້ງຢືນໜ້າວຽກ, ບໍລິມາດວຽກໃຫ້ຮັດກຸມ, ສົມເຫດສົມຜົນ ພ້ອມທັງປະຕິບັດ

ລະບອບສ່ອງແສງ, ລາຍງານສະພາບຕ່າງໆ ໃຫ້ແຂວງ ແລະ ກະຊວງຊາບ ຢ່າງເປັນປົກກະຕິ. ຖ້າຫາກເກີດເຫດການສຸກເສີນ ຫຼື ໄພພິບັດເຊັ່ນ: ດິນເຈື່ອນທັບຖົມໜ້າທາງ, ທາງເຈື່ອນ, ທໍ່ລະບາຍນ້ຳຖືກອຸດຕັນ ຫຼື ຫຼຸດຫຼ່ອນ, ຕົ້ນໄມ້ລົ້ມທັບທາງ ແລະ ເຫດການອື່ນໆ ໃຫ້ປະຕິບັດດັ່ງນີ້:

3.1.1 <u>ການຈັດຕັ້ງແກ້ໄຂ</u>: ປະຕິບັດຕາມຄວາມຮັບຜິດຊອບ ລະຫວ່າງ ສູນກາງ (ກະຊວງ ຍທຂ, ກົມຂົວທາງ) ແລະ ທ້ອງຖິ່ນ (ແຂວງ, ພະແນກ ຍທຂ): ໃຫ້ປະຕິບັດຕາມຂໍ້ຕົກລົງແບ່ງຄວາມຮັບຜິດຊອບ ທີ່ໄດ້ເຊັນ ກັບ ບັນດາທ່ານເຈົ້າແຂວງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ໃນເດືອນ 10/2004 ເຊັ່ນ:

3.1.1.1 "ແຂວງ ແລະ ນະຄອນຫຼວງວຽງຈັນ" ຈະຕ້ອງໄດ້ເອົາໃຈໃສ່ ຊອກຫາວິທີແກ້ໄຂເຫດການດັ່ງກ່າວ ໃຫ້ທ່ວງທັນກັບເວລາ ເພື່ອບໍ່ໃຫ້ເປັນອຸປະສັກແກ່ການສັນຈອນ. ພ້ອມດຽວກັນນັ້ນ ກໍ່ເກັບກຳຂໍ້ມູນບໍລິມາດຂອງໜ້າວຽກ, ມູນຄ່າຂອງຄວາມເສຍຫາຍ, ວິທີການແກ້ໄຂ ແລະ ງົບປະມານ ທີ່ຕ້ອງການ<u>ເພີ່ມເຕີມ</u> ແລ້ວສົ່ງໃຫ້ກະຊວງ.

3.1.1.2 "ແຂວງ ແລະ ນະຄອນຫຼວງວຽງຈັນ" ເປັນຜູ້ກວດກາ ເອກະສານປະມູນ ເພື່ອຮັບຮອງ ເອົາຜົນຂອງການປະມູນ ດ້ວຍວິທີການປະມູນ ຫຼື ທາບທາມລາຄາ, ການເຊັນສັນຍາໂດຍກົງ ຫຼື ເປັນການເຈລະຈາໂດຍກົງ ກັບບໍລິສັດ ກໍ່ໄດ້ໂດຍອີງໃສ່ສະພາບຕົວຈິງ ໃນການຈັດຫາບໍລິສັດຮັບເໝົາ ຢູ່ແຕ່ລະແຂວງ ຫຼື ກັບ ບ້ານໂດຍກົງ ເພື່ອປະຕິບັດວຽກງານດັ່ງກ່າວ ແລ້ວແຈ້ງໃຫ້ກະຊວງຊາບ ກ່ຽວກັບການຮັບຮອງ ຫຼື ບໍ່ຮັບຮອງເອົາ ຜົນຂອງການປະມູນ, ແຈ້ງເຫດຜົນ ແລະ ຂັ້ນຕອນຕໍ່ໄປ ເພື່ອຈະຮັບຮອງເອົາ ແລະ ຕ້ອງໄດ້ຮັບອະນຸມັດຈາກກະຊວງກ່ອນ ຈຶ່ງຕົກລົງເຊັນສັນຍາກັບຜູ້ຮັບເໝົາ ຕາມແຈ້ງການຂອງກະຊວງ ສະບັບເລກທີ 198/ຄຂປກ, ລົງວັນທີ 17/01/2007 ທີ່ໄດ້ມອບໃຫ້ທ່ານເຈົ້າແຂວງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເປັນຜູ້ຕົກລົງເຊັນສັນຍາ. ຍົກເວັ້ນກໍລະນີທີ່ນຳໃຊ້ທຶນຂອງແຂວງ ຫຼື ນະຄອນຫຼວງວຽງຈັນເອງ.

3.1.1.3 ກະຊວງຈະສົ່ງວິຊາການລົງໄປສົມທົບ ກັບວິຊາການຂອງ "ແຂວງ ແລະ ນະຄອນຫຼວງວຽງຈັນ" ບາງຄັ້ງຄາວ ຕາມການສະເໜີຂອງແຂວງ ເພື່ອພ້ອມກັນແກ້ໄຂສະພາບສຸກເສີນດັ່ງກ່າວ.

3.1.1.4 ເມື່ອ"ແຂວງ ແລະ ນະຄອນຫຼວງວຽງຈັນ" ເຊັນສັນຍາແລ້ວ ຕ້ອງສົ່ງເອກະສານສັນຍາ ໃຫ້ກະຊວງ.

3.1.2 <u>ຕ້ອງຮັບປະກັນແຕ່ລະດ້ານບໍ່ໃຫ້ເກີດການຊ້ຳຊ້ອນກັນ</u>:

3.1.2.1 <u>ດ້ານວຽກງານ</u>: ກໍລະນີຫາກການແກ້ໄຂສະພາບການເປ່ເພ ເສຍຫາຍທີ່ເກີດຂຶ້ນ ແລະ ໄດ້ເຊັນສັນຍາກັບບໍລິສັດຮັບເໝົາ ເພື່ອກໍ່ສ້າງ-ສ້ອມແປງ ແຕ່ການກໍ່ສ້າງ-ສ້ອມແປງ ບໍ່ສຳເລັດຕາມກຳນົດເວລາທີ່ລະບຸໃນສັນຍາ, ມີການແກ່ຍາວດ້ວຍເຫດຜົນໃດກໍ່ຕາມ ຫຼື ຜ່ານສົກງົບປະມານອື່ນນັ້ນ ພະແນກ ຍທຂ ຕ້ອງໄດ້ສົມທົບກັບຄະນະກຳມະການກວດກາ ທີ່ມາຈາກພາກສ່ວນກ່ຽວຂ້ອງ ຂອງແຂວງ ລົງກວດກາ ແລະ ຢັ້ງຢືນ ໂດຍແຍກໃຫ້ໄດ້ວ່າ ອັນໃດເປັນວຽກເກົ່າ ? ແລະ ອັນໃດ ເປັນວຽກໃໝ່ ?. ກໍລະນີວຽກເກົ່າປະຕິບັດບໍ່ສຳເລັດ ແຕ່ມີການເປ່ເພເພີ່ມຂຶ້ນ ຫຼື ວຽກປະຕິບັດສຳເລັດແລ້ວ ແຕ່ຍັງຢູ່ໃນໄລຍະຄ້ຳປະກັນການເປ່ເພ ກໍ່ຕ້ອງແຍກໃຫ້ໄດ້ວ່າ: ຕົກເປັນຄວາມຮັບຜິດຊອບຂອງບໍລິສັດຮັບເໝົາ ຍ້ອນການປະຕິບັດບໍ່ສຳເລັດຕາມກຳນົດເວລາ ທີ່ລະບຸໃນສັນຍາ, ແກ້ໄຂຊັກຊ້າ, ແກ່ຍາວ

ເທົ່າໃດ ? ແລະ ຕົກເປັນຄວາມຮັບຜິດຊອບ ຂອງເຈົ້າຂອງໂຄງການເທົ່າໃດ ? ແລະ ໃນໄລຍະຄ້ຳປະກັນ ຜູ້ຮັບເໝົາກໍ່ຕ້ອງປະຕິບັດຕາມຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ.

3.1.2.2 ດ້ານງົບປະມານ: ກະຊວງຈະສັງລວມຂໍ້ມູນທາງດ້ານບໍລິມາດ, ງົບປະມານ ຕາມການສົມທົບກວດກາຢັ້ງຢືນ ແລະ ນຳສະເໜີໄປ ຂອງແຂວງນັ້ນ ເພື່ອຄົ້ນຄ້ວາຈັດຫາງົບປະມານມາຊຳລະສະສາງ ໃຫ້ແກ່ການ ແກ້ໄຂວຽກງານດັ່ງກ່າວ ແລະ ຈະແຈ້ງໃຫ້ "ແຂວງ ແລະ ນະຄອນຫຼວງວຽງຈັນ" ຊາບ ກ່ຽວກັບການຈັດຫາງົບປະມານໃຫ້ແຂວງ ຕາມຄວາມເໝາະສົມ, ແຕ່ບົນພື້ນຖານຄື:

3.1.2.2.1 ຕອນທາງທີ່ບໍ່ໄດ້ເຊັນສັນຍາມອບເໝົາຂາດຕົວ: ຈະແມ່ນເຫດການສຸກເສີນ ຫຼື ໄພພິບັດກໍ່ຕາມ ກະຊວງຈະອີງຕາມຂໍ້ມູນຂ້າງເທິງ ເພື່ອສະເໜີຂໍອະນຸມັດງົບປະມານໃຫ້.

3.1.2.2.2 ຕອນທາງທີ່ໄດ້ເຊັນສັນຍາມອບເໝົາຂາດຕົວແລ້ວ: ຕາມເງື່ອນໄຂສັນຍາ: ທຸກການເປເພເສຍຫາຍ ທີ່ເກີດຂຶ້ນ ລວມທັງກໍລະນີເກີດເຫດການສຸກເສີນ, ວຽກສຸກເສີນ ຈະເປັນຄວາມຮັບຜິດຊອບທັງໝົດ ຂອງບໍລິສັດຮັບມອບເໝົາຂາດຕົວ 3ປີ, ແຕ່ສຳລັບວຽກທີ່ເກີດຈາກໄພພິບັດທາງທຳມະຊາດ ຕ້ອງແຍກໃຫ້ ຮູ້ວ່າ: ວຽກໃດ, ບໍລິມາດເທົ່າໃດ ?, ຕົກເປັນມູນຄ່າເທົ່າໃດ ? ທີ່ເກີດຈາກເຫດການສຸກເສີນ ແລະ ວຽກໃດ, ບໍລິມາດເທົ່າໃດ ?, ຕົກເປັນມູນຄ່າເທົ່າໃດ ? ທີ່ເກີດຈາກໄພພິບັດ ແລະ ໄພພິບັດດັ່ງກ່າວຕ້ອງໄດ້ຮັບການຢັ້ງຢືນ ຈາກລັດຖະບານ.

- ກໍລະນີມີການດັດແກ້ ຫຼື ດຸ່ນດ່ຽງງົບປະມານ, ຖ້າຫາກເຫັນວ່າມີຄວາມຫຍຸ້ງຍາກໃນການໂອນງົບປະມານດັ່ງກ່າວ ການເບີກຈ່າຍແມ່ນສະເໜີ ໃຫ້ຊຳລະສະສາງໂດຍຜ່ານກະຊວງ ຍທຂ, ກະຊວງການເງິນ ທີ່ນະຄອນຫຼວງວຽງຈັນ.

4. ໃຫ້ພະແນກ ຍທຂ ສົມທົບກັບພາກສ່ວນກ່ຽວຂ້ອງ ຂອງແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອຮັບປະກັນຄວາມເປັນເອກະພາບ ໃນການກວດກາ, ເກັບກຳ, ຢັ້ງຢືນໜ້າວຽກ, ບໍລິມາດວຽກ ໃຫ້ຮັດກຸມ, ສົມເຫດສົມຜົນ ພ້ອມທັງ ລາຍງານສະພາບຄວາມເສຍຫາຍ, ຄວາມຄືບໜ້າໃນການຈັດຕັ້ງແກ້ໄຂ ສະພາບຕ່າງໆ ໃຫ້ແຂວງ ແລະ ກະຊວງຊາບຢ່າງເປັນປົກກະຕິ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ

ບ່ອນສົ່ງ:

+ ທ່ານລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະເລຂາທິການລັດຖະບານ 1ສະບັບ ເພື່ອລາຍງານ

+ ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ທ່ານເຈົ້າແຂວງ ທ່ານລະ 1ສະບັບ ເພື່ອຊາບ